DEPARTMENT OF HEALTH

# ຂ້ອຍຄວນຈະໄປຮັບການກວດມື້ໃດ? ການເດີນທາງໄປຕ່າງປະເທດ

## ຂໍ້ຄວາມ

[ຈັງຫວະເພັງ]

[ການເລົ່າເລື່ອງ]

ແມ່ນໃຜຄວນຈະໄດ້ຮັບການກວດຊອກຫາໂຄວິດ-19?

ຄອບຄົວຂອງທ່ານກຳລັງຈະເດີນທາງໄປທ່ຽວຕ່າງປະເທດ. CDC ແນະນຳໃຫ້ເຂົ້າຮັບການກວດຊອກຫາ ໂຄວິດ-19 ກ່ອນ ແລະ ຫຼັງການເດີນທາງ. ເຂົ້າເບິ່ງເວັບໄຊທ໌ CDC (https://www.cdc.gov/coronavirus/2019-ncov/travelers/international-travel-during-covid19.html) ສຳລັບເງື່ອນໄຂ ແລະ ຄຳແນະນຳສຳລັບການເດີນທາງ ສະບັບປັບປຸງລ້າສຸດ.

ບາງປະເທດຍັງອາດຈະຕ້ອງໃຫ້ທ່ານກວດຊອກຫາໂຄວິດ-19 ກ່ອນທີ່ທ່ານຈະເດີນທາງ ຫຼື ຕ້ອງໄດ້ສັກ ຢາວັກຊີນ. ຕ້ອງກວດສອບໃຫ້ແນ່ໃຈສຳລັບເງື່ອນໄຂຂອງການເດີນທາງສະເພາະຂອງ ປະເທດປາຍທາງ ຂອງທ່ານ. (https://travel.state.gov/content/travel/en/traveladvisories/COVID-19-Country-Specific-Information.html)

ນອກຈາກນັ້ນ, ເມື່ອກັບຄືນສະຫະລັດ, ນັກທ່ອງທ່ຽວທຸກຄົນ**ຈະຕ້ອງ**ສະແດງຜົນການກວດຊອກຫາໂຄວິດ-19 ເປັນລົບບໍ່ເກີນ**ໜຶ່ງ**ວັນກ່ອນການເດີນທາງ.

ກະລຸນາຢ່າເດີນທາງຖ້າວ່າ ທ່ານກຳລັງບໍ່ສະບາຍ ຫຼື ຖ້າຜົນກວດໂຄວິດ-19 ຂອງທ່ານເປັນບວກ ແລະ ຍັງບໍ່ທັນຮອດ 10 ວັນນັບຈາກທ່ານເລີ່ມມີອາການ ຫຼື ໄດ້ຮັບການກວດ.

ຢ່າເດີນທາງ ຖ້າວ່າທ່ານເປັນຜູ້ທີ່ໃກ້ຊິດກັບຄົນທີ່ເປັນໂຄວິດ-19. ໄປຮັບການກວດຫ້າວັນ ຫຼັງຈາກທີ່ທ່ານໄດ້ສຳພັດ ແລະ ຢ່າເດີນທາງຈົນກວ່າທ່ານຈະສິ້ນສຸດການກັກໂຕ ແລະ ໄລຍະທີ່ໃສ່ຜ້າປິດປາກ 10 ວັນ.

ກະລຸນາຢ່າເດີນທາງຖ້າວ່າ ທ່ານກຳລັງລໍຖ້າຜົນກວດຫາເຊື້ອໂຄວິດ-19. ຖ້າຜົນກວດຂອງທ່ານກັບມາ ເປັນບວກໃນຂະນະທີ່ທ່ານເຖິງຈຸດໝາຍປາຍທາງ, ທ່ານຈະຕ້ອງໄດ້ແຍກປ່ຽວ ແລະ ເລື່ອນມື້ກັບຂອງທ່ານອອກໄປຈົນກວ່າທ່ານຈະປອດໄພ ແລະ ສິ້ນສຸດການແຍກປ່ຽວ. ຄອບຄົວຂອງທ່ານ ແລະ ຜູ້ທີ່ສຳພັດໃກ້ຊິດກັບທ່ານອາດຈະຕ້ອງກັກໂຕ ເຊັ່ນດຽວກັນ.

ຖ້າທ່ານບໍ່ມີການສັກຢາວັກຊີນໂຄວິດ-19 ທັງໝົດທີ່ໄດ້ແນະນຳ, ທ່ານຄວນຈະບໍ່ເດີນທາງອອກໄປຕ່າງ ປະເທດ. ຖ້າທ່ານຕ້ອງເດີນທາງ, ໄປກວດຊອກຫາໂຄວິດ-19 ໃນມື້ໃກ້ຄຽງກັບເວລາກຳນົດໃນການເດີນ ທາງ, ບໍ່ໃຫ້ເກີນສາມວັນກ່ອນມື້ເດີນທາງຂອງທ່ານ.

ໃນກໍລະນີນີ້, ຄອບຄົວຂອງທ່ານຈະເດີນທາງໃນວັນພຸດ. ສະມາຊິກທຸກຄົນໃນຄອບຄົວ ທີ່ຍັງບໍ່ທັນໄດ້ຮັບການສັກຢາວັກຊີນໂຄວິດ-19 ທັງໝົດທີ່ໄດ້ແນະນຳຄວນຈະໄປກວດຊອກຫາໂຄວິດ-19 ໃນວັນອາທິດ, ວັນຈັນ, ຫຼື ວັນອັງຄານ ກ່ອນການເດີນທາງຂອງທ່ານ.

ນອກຈາກນັ້ນ, *ທຸກໆຄົນ* ຄວນຈະໄປຮັບການກວດຊອກຫາໂຄວິດ-19 ສາມຫາຫ້າວັນ***ຫຼັງຈາກ***ການເດີນທາງໄປຕ່າງປະເທດຍົກເວັ້ນແຕ່ວ່າພວກເຂົາໄດ້ຮັບຜົນກວດໂຄວິດ-19 ເປັນບວກພາຍໃນ 90 ວັນຜ່ານ ມາ.

ທ່ານ ແລະ ຄອບຄົວຂອງທ່ານ ກັບຄືນຈາກການທ່ອງທ່ຽວໃນວັນສຸກ. ພວກທ່ານທຸກຄົນຄວນຈະໄປຮັບການກວດໃນວັນຈັນ, ວັນອັງຄານ, ຫຼື ວັນພຸດ. ຖ້າທ່ານພົບວ່າມີອາການ, ໄປຮັບການກວດທັນທີ.

ນັກທ່ອງທ່ຽວຜູ້ທີ່ຍັງບໍ່ທັນໄດ້ຮັບການສັກຢາວັກຊີນໂຄວິດ-19 ຕາມຄຳແນະນຳທັງໝົດ ຍັງຄົງຕ້ອງພັກຢູ່ເຮືອນ (ກັກໂຕເອງ) ເປັນເວລາ 5 ວັນ ຫຼັງຈາກທີ່ກັບມາຈາກການເດີນທາງມາແຕ່ຕ່າງປະເທດ. ຄົນທີ່ໄດ້ການສັກຢາວັກຊີນໂຄວິດ-19 ທັງໝົດຕາມຄຳແນະນຳ ຫຼື ເປັນໂຄວິດ-19 ໃນສາມເດືອນຜ່ານມາ ບໍ່ຈຳເປັນຕ້ອງກັກໂຕ.

ຮຽນຮູ້ເພີ່ມເຕີມວ່າ ເວລາໃດທີ່ທ່ານຄວນຈະໄປຮັບການກວດ, ແລະ ໄປຮັບການກວດໄດ້ຢູ່ໃສ, ເຂົ້າເບິ່ງໄດ້ທີ່ເວັບເພສ໌ການກວດໂຄວິດ-19 ຂອງ MDH.
(https://www.health.state.mn.us/diseases/coronavirus/testsites/index.html)

[ຈັງຫວະເພັງ]

Minnesota Department of Health
Communications Office
PO Box 64975
St. Paul, MN 55164-0975
651-201-4989
health.communications@state.mn.us
www.health.state.mn.us

2/2/22 (Lao)

*ຕ້ອງການໄດ້ຮັບຂໍ້ມູນນີ້ເປັນຮູບແບບອື່ນ, ໂທຫາ: 651-201-4989*